# <u>ແບບຟອມລາຍງານຜົນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການລົງທຶນ ສຳລັບ ໂຄງການຂຸດຄົ້ນຫີນກາວ, ເຂດບ້ານຄຳແສນໄຊ, ເມືອງໄຊພູທອງ, ແຂວງສະຫວັນນະເຂດ</u>

## I. <u>ຂໍ້ມູນ ກ່ຽວກັບ ໂຄງການ</u>

- ຊື່ໂຄງການ:...............**ໂຄງການຂຸດຄົ້ນຫີນກາວ**..........................................................................
- ຊື່ເຈົ້າຂອງໂຄງການ:.....**ບໍລິສັດ ແສງຈັນ ບໍ່ແຮ່ ຈຳກັດ**...................................................................
- ປະເພດໂຄງການ:...............**IEE**...............................................................................................
- ທີ່ຕັ້ງໂຄງການ: ..............**ເຂດບ້ານຄຳແສນໄຊ, ເມືອງໄຊພູທອງ, ແຂວງສະຫວັນນະເຂດ**..........................
- ຂະແໜງການ:...................**ບໍ່ແຮ່**............................................................................................
- ໄລຍະສຳປະທານ:.............**10 ປີ**............................................................................................
- ກຳລັງການຜະລິດ:...........**200,000ໂຕນ/ປີ**...........................................................................
- ເນື້ອທີ່ສຳປະທານໂຄງການ:................**350 ເຮັກຕາ**.......................................................................
- ເນື້ອທີ່ຂຸດຄົ້ນ:................ **140.10 ເຮັກຕາ**.........................................................................
- ສະຖານະພາບໂຄງການ (IEE/EIA):....**ໄລຍະຂຸດຄົ້ນ**.................................................................
- ໃບຢັ້ງຢືນຮັບຮອງ ( IEE/EIA):.................. **IEE**...............................................................

  ລົງວັນທີ, ເລກທີ:............**20 ມີນາ 2009, 565/ສນຍ.ອຂນສ**.........................................

## II. <u>ຄະນະຕິດຕາມກວດກາ</u>

- ວັນທີລົງຕິດຕາມກວດກາ:......**13-16/03/2017**........................................................................
- ປະເພດການຕິດຕາມກວດກາ:.....**ປົກກະຕິ**.....................................................................................
- ຄະນະຕິດຕາມກວດກາ:..**ທີມງານ ກປສສ, ກຂສ; ກົມບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່; ພະແນກ ຊສ ແຂວງ ສະຫວັນນະເຂດ; ຫ້ອງການ ຊສ ເມືອງ ໄຊພູທອງ**.........................................................
- ບົດບັນທຶກລົງຕິດຕາມກວດກາ:............**ຢູ່ໃນເອກະສານຄັດຕິດ 1**...................................................
- ລາຍຊື່ຄະນະລົງຕິດຕາມກວດກາ:..........**ຢູ່ໃນເອກະສານຄັດຕິດ 2**...................................................
- ລາຍການກວດສອບ:.......................**ຢູ່ໃນເອກະສານຄັດຕິດ 3**...................................................

## III. ຈຸດປະສົງຂອງການກວດກາ ແລະ ບັນຫາທີ່ເອົາໃຈໃສ່

– ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຕາມທີ່ກຳນົດໄວ້ໃນບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບ ສິ່ງແວດລ້ອມ;
– ເງື່ອນໄຂ ແລະ ພັນທະທີ່ກຳນົດໃນໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ.

## IV. ສະພາບການຈັດຕັ້ງປະຕິບັດໂຄງການມາເຖິງປະຈຸບັນ

ໂຄງການຂຸດຄົ້ນແຮ່ຫີນກາວ ໄດ້ຮັບອະນຸຍາດການຂຸດຄົ້ນ ໃນປີ 2009, ໃນເນື້ອທີ່ຂຸດຄົ້ນທັງໝົດ 140.10 ເຮັກຕາ, ໃນເບື້ອງຕົ້ນທາງໂຄງການຈະຂຸດຄົ້ນ ໃນເນື້ອທີ່ 20 ເຮັກຕາ, ໄລຍະເວລາ 10 ປີ, ແຕ່ໃນຕົວຈິງຂຸດຄົ້ນ ໄດ້ພຽງ 4 ເຮັກຕາ. ນັບແຕ່ປີ 2014 ມາເຖິງປະຈຸບັນ ທາງໂຄງການໄດ້ຢຸດຕິການຂຸດຄົ້ນ, ເນື່ອງຈາກ ລາຄາແຮ່ໃນຕະຫຼາດໂລກຕົກຕໍ່າ, ແຕ່ທາງໂຄງການມີແຜນຈະສືບຕໍ່ການຂຸດຄົ້ນ ໃນປີ 2017 ນີ້(ປະຈຸບັນ ກຳລັງດູດນ້ຳອອກຈາກບໍ່ແຮ່ ເພື່ອດຳເນີນການຂຸດຄົ້ນ).

## V. ບັນຫາທີ່ພົບເຫັນ

**ສຳລັບ ບັນຫາທີ່ພົບເຫັນໃນພາກສະໜາມບໍ່ມີຫຍັງຫຼາຍ, ເນື່ອງຈາກ ໂຄງການບໍ່ໄດ້ມີການເຄື່ອນໄຫວເປັນເວລາ 3 ປີ ແລ້ວ, ແຕ່ມີບາງບັນຫາທີ່ໃຫ້ບໍລິສັດ ເອົາໃຈໃສ່ ເປັນຕົ້ນແມ່ນ:**

– **ສິ່ງເສດເຫຼືອ:..**ມີກອງເສດແຮ່ຈຳນວນໜຶ່ງຊະຊາຍ ແລະ ເກັບມ້ຽນບໍ່ເປັນລະບົບ ຕາມເສັ້ນທາງ ໃນເຂດພື້ນທີ່ຂອງໂຄງການ;
– **ແລະ ອື່ນໆ**:
- ✓ ບໍ່ມີປ້າຍເຕືອນກຳນົດຄວາມໄວຂອງຍານພາຫານະຂົນສົ່ງແຮ່ ໃນເຂດພື້ນທີ່ໂຄງການ ແລະ ເຂດຊຸມຊົນ ເນື່ອງຈາກ ປ້າຍທີ່ເຄີຍຕິດຕັ້ງຖືກເສຍຫາຍ;
- ✓ ຍັງບໍ່ທັນຕອບສະໜອງງົບປະມານບ້ວງຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ກຳນົດໄວ້ໃນບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ຂອງພາກສ່ວນສູນກາງ, ແຂວງ ແລະ ເມືອງ ເພື່ອນຳໃຊ້ເຂົ້າໃນການຕິດຕາມກວດກາໂຄງການນັບແຕ່ປີ 2015 ເປັນຕົ້ນມາ;
- ✓ ບໍ່ມີການລາຍງານຄວາມຄືບໜ້າ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດລ້ອມໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບ.

## VI. <u>ສະເໜີແກ້ໄຂ</u>

–**ອະທິບາຍການແກ້ໄຂບັນຫາໂດຍຫຍໍ້**: ກ່ອນທີ່ບໍລິສັດ ຈະສືບຕໍ່ດຳເນີນຂຸດຄົ້ນໃໝ່, ບໍລິສັດ ຕ້ອງເອົາໃຈໃສ່ແກ້ໄຂບັນຫາດັ່ງນີ້:

1. ໃຫ້ບໍລິສັດ ສ້າງອ່າງບຳບັດນ້ຳເສຍ ເພື່ອຮອງຮັບນ້ຳເສຍຈາກການລ້າງແຮ່ ແລະ ກິດຈະກຳຕ່າງໆ ໃນພື້ນທີ່ໂຄງການ;
2. ໃຫ້ບໍລິສັດ ມີສະຖານທີ່ເກັບມ້ຽນເສດແຮ່ ສະເພາະໃນເຂດພື້ນທີ່ໂຄງການ;
3. ໃຫ້ບໍລິສັດ ເອົາໃຈໃສ່ຫົດນ້ຳຕາມເສັ້ນທາງໃນພື້ນທີ່ການຂຸດຄົ້ນ ແລະ ເຂດຊຸມຊົນ ຢ່າງໜ້ອຍ 2-3 ຄັ້ງຕໍ່ມື້ ຖ້າຫາກມີການຂຸດຄົ້ນ;
4. ໃຫ້ບໍລິສັດ ຕິດຕັ້ງປ້າຍເຕືອນກຳລິດຄວາມໄວຂອງຍານພາຫະນະ ຕາມທີ່ກຳນົດໄວ້ໃນແຜນ 15-20 ກມ/ຊົ່ວໂມງ;
5. ໃຫ້ບໍລິສັດ ຕອບສະໜອງງົບປະມານ ການຕິດຕາມກວດກາວຽກງານການຄຸ້ມຄອງສິ່ງແວດລ້ອມ ຕາມທີ່ກຳນົດໄວ້ໃນແຜນການຄຸ້ມຄອງສິ່ງແວດລ້ອມ ໃຫ້ພາກສ່ວນ ກປສສ, ກຊສ, ພະແນກ ຊສ ແຂວງສະຫວັນນະເຂດ ແລະ ຫ້ອງການ ຊສ ເມືອງໄຊພູທອງ ເພື່ອນຳໃຊ້ເຂົ້າໃນການຕິດຕາມກວດກາໂຄງການ;
6. ບໍລິສັດ ຕ້ອງເອົາໃຈໃສ່ສົ່ງບົດລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທຸກໆ 3 ເດືອນ ແລ້ວສົ່ງໃຫ້ ກຊສ, ພະແນກ ຊສ ແຂວງ ແລະ ຫ້ອງການ ຊສ ເມືອງໄຊພູທອງ ເປັນປົກກະຕິ.